ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ, ທີ 24 ເມສາ 2505 ( 4-24-2005 )

---

# ການໃຊ້ຊີວິດຢ່າງຖ່ອມຕົວ

**ພື້ນຖານຂອງເລື່ອງ :** ( ຢກບ 4:1-17 )

**ພຣະຄັມພີຂໍ້ສຳຄັນ :** ( ຢກບ 4:1-10,13-17 )

**ຄວາມຈິງໃນພຣະຄັມພີ :** ຄົນທີ່ມີຄວາມເຊື່ອແທ້ຈິງໃນພຣະເຈົ້າຈະມີຊັຍເຫນືອການທະນົງຕົວດ້ວຍການຍອມຖ່ອມຕົວຢູ່ພາຍໃຕ້ພຣະເຈົ້າ.

**ຜົນສະທ້ອນຕໍ່ຊີວິດ :** ເພື່ອຊ່ອຍທ່ານໃຫ້ມີຊັຍເຫນືອການທະນົງຕົວດ້ວຍການຍອມຖ່ອມຕົວຢູ່ພາຍໃຕ້ພຣະເຈົ້າ.

## ຂ້າພະເຈົ້າຈະເອົາຊະນະການທະນົງຕົວຂອງຂ້າພະເຈົ້າໄດ້ຢ່າງໃດ?

ທ່ານ ຣິດຊາດ ເປັນຄຣິສຕຽນຫນຸ່ມທີ່ປາຖນາຢາກຮັບໃຊ້ພຣະເຈົ້າດ້ວຍຄວາມຈິງໃຈໂດຍຜ່ານງານທຳຂອງຕົນເອງທີ່ເປັນຜູ້ຈັດການໃນຫ້ອງການຂອງບໍຣິສັດໃຫຍ່ແຫ່ງນຶ່ງ. ຄວາມຮັບຜິດຊອບອັນນຶ່ງຂອງເພິ່ນແມ່ນຈັດການກັບການຜິດຖຽງກັນທີ່ເກີດຂຶ້ນຣະຫວ່າງຄົນງານດ້ວຍກັນ. ທ່ານ ຣິດຊາດໄດ້ຮັບການຊ່ອຍເຫລືອໃນວັນໃຫມ່ດ້ວຍການອະທິຖານຈາກຈິດໃຈທີ່ຍອມຢູ່ໃຕ້ພຣະເຈົ້າ. ທຳອິດ ທ່ານສາຣະພາບຄວາມຜິດບາບແລະຄວາມອ່ອນແອຂອງທ່ານເອງ; ຕໍ່ໄປ ທ່ານໄດ້ຂໍໃຫ້ພຣະເຈົ້າໃຊ້ທ່ານເຫມືອນດັ່ງເປັນຜູ້ສ້າງຄວາມສງົບໃນທຸກສະພາບການ. ເປັນດ້ວຍເຫດໃດວິນັຍອັນນີ້ຈຶ່ງເຮັດໃຫ້ມີຄວາມແຕກຕ່າງໃນທ່ານຣິດຊາດ? ທ່ານໄດ້ຮຽນຮູ້ທີ່ຈະຈັດການກັບການທີ່ຈະເຮັດໃຫ້ການຜິດຂ້ອງຕ້ອງຖຽງກັນສງົບລົງຢ່າງໄດ້ຜົນບໍ່?

ເນື້ອເລື່ອງໃນພຣະຄັມພີຂອງບົດຮຽນບົດນີ້ ຈະເຜີຍໃຫ້ເຫັນຄວາມອັນຕະລາຍຂອງການຖືຕົວ. ທ່ານຈະໄດ້ພົບວ່າທ່ານຈະມີຊັຍຊະນະເຫນືອຄວາມບາບອັນນີ້ດ້ວຍການຍອມຕົວຢູ່ພາຍໃຕ້ພຣະເຈົ້າຢ່າງໃດ?

## ສຶກສາພຣະຄັມພີ

### 1- ຈົ່ງຫລີກເວັ້ນຈາກການຖືຕົວດ້ວຍການທູນຂໍ : ( ຢກບ 4:1-5

ຢາໂກໂບສເນີຫົວຂໍ້ເລື່ອງການຖືຕົວດ້ວຍການຕັ້ງຄຳຖາມທີ່ຫລໍ່ແຫລມດັ່ງນີ້: ອັນໃດເປັນສາຍເຫດການທະເລາະວິວາດກັນໃນຣະຫວ່າງພວກທ່ານ? ຈາກສັບທີ່ຢາໂກໂບໃຊ້ສຳລັບການວິວາດຜິດຖຽງກັນນັ້ນ ເຮັດໃຫ້ຮູ້ຈັກວ່າມີການຜິດຖຽງກັນຮ້າຍແຮງເກີດຂຶ້ນຢູ່ໃນຄຣິສຕະຈັກຂອງພວກເຂົາເຈົ້າ.

ຄວາມສຳພັນທີ່ດີຣະຫວ່າງຄົນທີ່ເຊື່ອດ້ວຍກັນທີ່ໄດ້ບັນຍາຍອອກມາກ່ອນເລື່ອງນີ້ແມ່ນເມື່ອຢາໂກໂບໄດ້ເວົ້າວ່າ: " ຜູ້ສ້າງສັນຕິສຸກຫວ່ານຢ່າງສັນຕິຈຶ່ງໄດ້ເກັບກ່ຽວຄວາມຊອບທັມ." ( ຢກບ 3:18 ). ແຕ່ວ່າຄົນທີ່ອ່ານພຣະທັມຢາໂກໂບນັ້ນຍັງຢູ່ຫ່າງໄກກັບຄວາມສັນຕິອັນນີ້. ດັ່ງນີ້ ເພິ່ນຈຶ່ງຊອກຫາວິທີທີ່ຈະຊ່ອຍເຫລືອພວກເຂົາເຈົ້າໃຫ້ໄດ້ເຫັນສາຍເຫດທີ່ມາຂອງບັນຫາຂອງພວກເຂົາ ດ້ວຍການຕັ້ງຄຳຖາມຢ່າງອື່ນວ່າ: " ບໍ່ແມ່ນກິເລດຕັນຫາຂອງພວກເຈົ້າຫລື ທີ່ເຮັດໃຫ້ພວກເຈົ້າຕໍ່ສູ້ກັນ? ເພິ່ນໄດ້ເວົ້າວ່າ, ບັນຫາທີ່ແທ້ຈິງນັ້ນມັນຢູ່ໃນພວກເຈົ້າເອງ. ຄຳວ່າ ກິເລດ ເປັນພາສາກຣີກແປວ່າ ຄວາມມ່ວນຊື່ນ. ຄຳວ່າ ຕັນຫາ ກໍມາຈາກພາສາກຣີກຄຳດຽວກັນ. ຕັນຫານັ້ນປຽບເຫມືອນ

ຄວາມມັກທີ່ເປັນຈຸດສຸດຍອດ. ຄຣິສຕຽນເຫລົ່ານີ້ໄດ້ຖືກລໍ້ລວງໃຫ້ຄິດວ່າການທຳໃຫ້ຊອບໃຈຕົນເອງນັ້ນເປັນການນຳມາຊຶ່ງຄວາມສຸກອັນຍິ່ງໃຫຍ່; ດັ່ງນັ້ນ ເຂົາຈຶ່ງໃຫ້ຄ່າສຳຄັນຍິ່ງໃນການໃຫ້ຄວາມພໍໃຈໃນເຣື່ອງຕັນຫາຂອງຕົນເອງ. ການປະພຶດເຊັ່ນນີ້ໄດ້ສະແດງອອກໃນຄຳທີ່ວ່າ: ເຈົ້າທັງຫລາຍຢາກໄດ້ແຕ່ບໍ່ໄດ້. ຄວາມຫມາຍກໍຄືວ່າພວກເຂົາຊອກສແວງຫາຄວາມມ່ວນຊື່ນໃນຫລາຍຮູບແບບ, ແຕ່ວ່າບໍ່ເຄີຍໄດ້ຮັບຄວາມພໍໃຈໃນສິ່ງທີ່ເຂົາໄດ້ຊອກສແວງຫານັ້ນເລີຍ.

ຢາໂກໂບໄດ້ບອກວ່າພວກຄົນທີ່ເຊື່ອເຫລົ່ານີ້ຍັງໄດ້ອະທິຖານຂໍສິ່ງທີ່ເຂົາມັກນຳພຣະເຈົ້າ, ແຕ່ກໍບໍ່ໄດ້ຮັບຄຳຕອບແຕ່ປະການໃດ, ເຈົ້າທັງຫລາຍຢາກໄດ້ແຕ່ບໍ່ໄດ້. ເປັນຫຽັງຄຳອະທິຖານຂອງເຂົາຈຶ່ງບໍ່ໄດ້ຮັບຄຳຕອບ? ເຈົ້າທັງຫລາຍຂໍແລະບໍ່ໄດ້ຮັບເພາະຂໍຜິດ ເພື່ອຈະເອົາໄປໃຊ້ຕາມກິເລດຕັນຫາຂອງຕົນ. ພຣະເຈົ້າຈະບໍ່ໃຫ້ສິ່ງທີ່ເປັນອັນຕະລາຍຕໍ່ລູກຂອງພຣະອົງຈັກເທື່ອ. ຖ້າພວກເຮົາອະທິຖານດ້ວຍເຫດຜົນຂອງຕົນທີ່ຜິດ, ຄຳຕອບຂອງພຣະເຈົ້າກໍຄື: ບໍ່. ເຖິງຢ່າງໃດກໍດີຄຳອະທິຖານອັນຈິງໃຈຫາພຣະເຈົ້າເພື່ອໃຫ້ຫລຸດພົ້ນຈາກການທະນົງຕົວແລ້ວ ແນ່ນອນຈະໄດ້ຮັບການສນອງໃນທາງເຫັນພ້ອມສເມີ.

ມີຫລາຍເຣື່ອງໃນພຣະຄັມພີໃຫມ່ໄດ້ເວົ້າເຖິງຄຣິສຕະຈັກວ່າເປັນເຈົ້າສາວຂອງພຣະຄຣິດນັ້ນ ( ອຟຊ 5:23-30, ພນມ 21:9 ). ເມື່ອພວກເຮົາທີ່ເປັນເຈົ້າສາວຂອງພຣະຄຣິດຫາກບໍ່ມີຄວາມສັດຊື່ຕໍ່ພຣະອົງນັ້ນ, ພວກເຮົາກໍມີຄວາມຜິດໃນຖານຫລິ້ນຊູ້ຝ່າຍວິນຍານ. ຢາໂກໂບໄດ້ໃຊ້ຄຳວ່າ ຄົນທີ່ຫລິ້ນຊູ້ເອີຍ ໃນເຣື່ອງນີ້. ຄຣິສຕຽນແຕ່ລະຄົນຄວນຈະເລືອກເອົາຣະຫວ່າງຄວາມຈົງຮັກພັກດີຕໍ່ພຣະຄຣິດຫລືວ່າຕໍ່ໂລກ. ຄຳວ່າ ໂລກ ໃນທີ່ນີ້ຫມາຍຄວາມວ່າທຸກຢ່າງທີ່ຢູ່ໃນໂລກນີ້ທີ່ກົງກັນຂ້າມກັບພຣະເຈົ້າ, ແລະຢູ່ໃຕ້ການຄວບຄຸມຂອງຊາຕານ. ໃຜກໍຕາມທີ່ພັທນາຄວາມເປັນມິດກັບໂລກ ແລະໄດ້ຍອມຮັບເອົາຄ່າແລະມາຕະຖານຂອງໂລກນີ້ ກໍໄດ້ຢູ່ໃນສະພາບທີ່ເປັນ ສັດຕຣູຕໍ່ພຣະເຈົ້າ. ການເລືອກຂອງພວກເຮົານັ້ນກໍຈະແຈ້ງ: ຈະເປັນ ມິດກັບກັບໂລກ ແຕ່ເປັນ ສັດຕຣູກັບພຣະເຈົ້າ ຫລືວ່າ ຈະເປັນເພື່ອນກັບພຣະເຈົ້າ.

## <u>2- ຈົ່ງຍອມຢູ່ພາຍໃຕ້ພຣະເຈົ້າດ້ວຍຄວາມຖ່ອມໃຈລົງ :</u> ( ຢກບ 4:6-10 )

ການປິ່ນປົວທີ່ມີຕໍ່ຄວາມທະນົງຕົວ ແລະຄວາມຊົ່ວທຸກຢ່າງທີ່ທຳໃຫ້ເກີດການທະນົງຕົວນັ້ນ ແມ່ນພຣະຄຸນຂອງພຣະເຈົ້າອັນດຽວເທົ່ານັ້ນ. ຢາໂກໂບອ້າງເຖິງ ສພສ 3:34 ເມື່ອເພິ່ນໄດ້ກ່າວວ່າ: ພຣະເຈົ້າຊົງຕໍ່ສູ້ຄົນທີ່ຈອງຫອງ, ແຕ່ຊົງປະທານພຣະຄຸນແກ່ຄົນທີ່ຖ່ອມໃຈລົງ. ຄົນທີ່ທະນົງຕົວໄດ້ຕໍ່ສູ້ກັບພຣະເຈົ້າ: ພຣະເຈົ້າຊົງຕໍ່ສູ້ຄົນທີ່ທະນົງຕົວຈອງຫອງ ໃນຄວາມຫມາຍວ່າພຣະອົງຊົງສູ້ຢັນກັບນິສັຍຂອງຄົນທີ່ອີງໃສ່ຄວາມເຊື່ອຫມັ້ນຂອງຕົນເອງ. ຄົນທີ່ຖ່ອມຕົວລົງແມ່ນຄົນທີ່ຮູ້ຈັກກັບຄວາມຈຳກັດຂອງຄວາມສາມາດຂອງຕົນເອງ ແລະໄດ້ເພິ່ງພຣະເຈົ້າໃນຄວາມຕ້ອງການຂອງຕົນເອງໃນທຸກຢ່າງ.

ຢາໂກໂບໄດ້ທ້າທາຍຄົນທີ່ອ່ານພຣະທັມຂອງເພິ່ນດ້ວຍຄຳສັ່ງຫລາຍຢ່າງໃນຂໍ້ 7-10. ແຕ່ລະຢ່າງແມ່ນເວົ້າເຖິງຈິດໃຈທີ່ຖ່ອມລົງ. ຈົ່ງນ້ອມໃຈຍອມຟັງພຣະເຈົ້າ. ການແກ້ໄຂການຜິດຖຽງທັງຫມົດທີ່ເກີດຂຶ້ນໃນຄຣິສຕະຈັກນັ້ນສ່ວນຫລາຍແມ່ນເກີດຂຶ້ນມາຈາກການເລີ້ມນ້ອມໃຈຍອມຟັງພຣະເຈົ້າຂອງສະມາຊິກທັງຫລາຍ.

ທີ່ຈະນ້ອມໃຈຍອມຟັງພຣະເຈົ້າໄດ້ນັ້ນ, ຈະຕ້ອງ ຕໍ່ສູ້ກັບມານ. ພຽງແຕ່ເວົ້າງ່າຍໆວ່າ, ໂດຍຕໍ່ພຣະເຈົ້າ ແລະວ່າ ບໍ່ຕໍ່ຊາຕານ ເທົ່ານັ້ນ. ຈົ່ງສັງເກດເບິ່ງຄຳສັ່ງນີ້. ດ້ວຍການນ້ອມຕົວຍອມຟັງພຣະເຈົ້າກ່ອນແລ້ວ ຄົນນັ້ນຈຶ່ງຈະໄດ້ຮັບພະລັງຝ່າຍວິນຍານ ແລະອຳນາດທີ່ຈະສາມາດຍືນຢັດເພື່ອຕໍ່ສູ້ກັບພະຍາມານໄດ້. ຫລັງຈາກນັ້ນ ມັນຈະຫນີຈາກພວກເຈົ້າໄປ. ພະຍາມານເປັນສັດຕຣູທີ່ເສັຽຊັຍແລ້ວ; ມັນບໍ່ສາມາດຈະຊະນະຕໍ່ຄົນທັງຫລາຍທີ່ຢູ່ໃນສາມັກຄີທັມກັບພຣະເຈົ້າ.

ເຈົ້າທັງຫລາຍຈົ່ງເຂົ້າມາໃກ້ພຣະເຈົ້າ. ຄຣິສຕຽນເຫລົ່ານີ້ທີ່ໄດ້ຊອກສແວງຫາຄວາມມ່ວນຊື່ນໃນໂລກນີ້, ດຽວນີ້ເຂົາຈະຕ້ອງສແວງຫາໃຫ້ຄວາມສາມັກຄີທັມກັບພຣະເຈົ້າໃຫ້ດີຄືນໃຫມ່ ດ້ວຍການອະທິຖານຢ່າງຈິງຈັງ ແລະສແວງຫາທີ່ຈະທຳທຸກຢ່າງໃຫ້ຖືກຕ້ອງຕາມນ້ຳພຣະທັຍຂອງພຣະເຈົ້າຢ່າງຈິງຈັງເຊັ່ນດຽວກັນ.

ການ ສຳຣະມືໃຫ້ສະອາດ ແມ່ນເວົ້າເຖິງການດັດແປງແກ້ໄຂການປະພຶດດ້ານນອກຂອງແຕ່ລະຄົນ. ການຊຳຣະໃຈຂອງຕົນໃຫ້ບໍຣິສຸດ ແມ່ນເລັງໃສ່ຄວາມນຶກຄິດ ແລະເຫດຜົນພາຍໃນຂອງແຕ່ລະຄົນ. ຄຳວ່າ ຄົນສອງໃຈ ແປວ່າຄົນທີ່ຄິດວ່າຕົນເອງຈະຮັກພຣະເຈົ້າ ແລະຮັກຄວາມມ່ວນຊື່ນຂອງໂລກໃນຂະນະດຽວກັນໄດ້.

ຂໍ້ທີ 9 ເປັນຂໍ້ທີ່ຮຽກເອີ້ນຢ່າງຊັດເຈນຕໍ່ຄົນທັງຫລາຍທີ່ໄດ້ປະຖິ້ມພຣະເຈົ້າໃຫ້ກັບຄືນມາກັບໃຈດ້ວຍຄວາມເສັຽອົກເສັຽໃຈແທ້ໆ: ຈົ່ງເປັນທຸກໂສກເສົ້າ ຈົ່ງຮ້ອງໄຫ້ແລະຮ່ຳໄຮ. ແງ່ນຶ່ງຂອງການຊຳຣະໃຈກໍແມ່ນການຮູ້ຈັກທັມມະຊາດອັນຮ້າຍແຮງຂອງຄວາມບາບ. ຄວາມບາບທຸກຢ່າງເປັນເຣື່ອງໂສກເສົ້າສຳລັບພຣະເຈົ້າ ແລະຄວນຈະເປັນເຣື່ອງທີ່ໂສກເສົ້າທີ່ສຸດສຳລັບເຮົາເຫມືອນກັນ. ພຽງແຕ່ຄວາມເຂົ້າໃກ້ຊິດກັບຄວາມສວ່າງແຈ້ງເທົ່ານັ້ນມັນຈະຊ່ອຍພວກເຮົາໃຫ້ເຫັນພາບສະທ້ອນອັນແຈ້ງມາຈາກແວ່ນແຍງ, ການເຂົ້າໃກ້ພຣະເຈົ້ານັ້ນຈະເຮັດໃຫ້ເຮົາສາມາດເຫັນທັມມະຊາດອັນຈິງຂອງຄວາມບາບພວກເຮົາ.

ຢາໂກໂບໄດ້ຮ້ອງຂໍໃຫ້ ຄົນທີ່ຫົວເລາະ ຊຶ່ງເປັນຄົນທີ່ຫາຄວາມມ່ວນຊື່ນຈາກໂລກ ໃຫ້ກັບກາຍເປັນການຮ້ອງໂສກເສົ້າ. ແລະຄວາມຍິນດີມ່ວນຊື່ນກັບການກະທຳຂອງໂລກນັ້ນກັບກາຍເປັນການເສົ້າຫມອງ ແລະຖິ້ມໃຈເກົ່າເອົາໃຈໃຫມ່ເສັຽ. ບໍ່ມີຄຳສເນີໃດໆໃນທີ່ນີ້ທີ່ເຍືອງໃຫ້ເຫັນວ່າພວກຄຣິສຕຽນມີຄວາມເສັຽໃຈກິນແຫນງແລະໄດ້ກຽດຊັງຕົນເອງຈັກນ່ອຍ. ຄຳເວົ້າຂອງຢາໂກໂບຄວນຈະໄດ້ເຂົ້າໃຈເພື່ອນຳໄປໃຊ້ສຳລັບຄົນທີ່ໄດ້ຫນີຈາກການສາມັກຄີທັມກັບພຣະເຈົ້າ ເພື່ອໄປຊອກຫາຄວາມສນຸກສນານກັບຄວາມບາບ.

ຄຳສັ່ງຈາກຢາໂກໂບອັນນີ້ໄດ້ມີຈຸດຫມາຍເພື່ອນຳໃຫ້ຄົນທີ່ເຊື່ອໃຫ້ຖ່ອມຕົວເຂົາເຈົ້າລົງຕໍ່ຫນ້າພຣະເຈົ້າ. ຂ່າວດີນັ້ນແມ່ນວ່າ ເມື່ອເຂົາໄດ້ຖ່ອມຕົວຖ່ອມໃຈລົງຕໍ່ພຣະອົງແລ້ວ, ພຣະອົງຈະໄດ້ຍົກຊູພວກເຮົາຂຶ້ນ. ອັນນີ້ແມ່ນຄວາມຈິງອັນອັສຈັນແລະຫນ້າປລາດໃຈແທ້ໆ! ແທນທີ່ຈະສາບແຊ່ງແລະທຳລາຍຄົນບາບ, ແຕ່ພຣະເຈົ້າກໍພ້ອມແລະບໍ່ພຽງແຕ່ໃຫ້ອະພັຍເຂົາແຕ່ຍັງຈະໄດ້ຍົກຊູພວກທີ່ໄດ້ຖ່ອມຕົວແລະຍອມຟັງພຣະອົງອີກ.

## <u>3- ຈົ່ງສແວງຫານ້ຳພຣະທັຍພຣະເຈົ້າຢ່າງຈິງຈັງ:</u> ( ຢກບ 4:13-17 )

ຂໍ້ຄວາມເຫລົ່ານີ້ຊີ້ໃຫ້ເຫັນຄວາມແຕກຕ່າງຣະຫວ່າງການເບິ່ງໄປຂ້າງຫນ້າສອງຢ່າງໃນຊີວິດ. ຄົນນຶ່ງແມ່ນຄົນທະນົງຕົວ ຄົນທີ່ອີງໃສ່ຄວາມສາມາດຂອງຕົນເອງທີ່ຕັດສິນໃຈຢ່າງບໍ່ໄດ້ປຶກສານຳພຣະເຈົ້າກ່ອນ. ອີກຄົນນຶ່ງນັ້ນເປັນຄົນຖ່ອມຕົວທີ່ມີການຊອກຫານ້ຳພຣະທັຍຂອງພຣະເຈົ້າແທ້ໆໃນການເລືອກສຳລັບຊີວິດ. ຢາໂກໂບໄດ້ເລີ້ມເຣື່ອງຂອງເພິ່ນດ້ວຍການເວົ້າເຖິງຄົນທີ່ມີຄວາມຕັ້ງໃຈຈະບໍ່ສົນໃຈນຳນ້ຳພຣະທັຍຂອງພຣະເຈົ້າ. ດັ່ງນີ້ແຫລະ, ເຈົ້າທັງຫລາຍທີ່ເຄີຍເວົ້າວ່າ, " ມື້ນີ້ຫລືມື້ອື່ນພວກເຮົາຈະເຂົ້າໄປໃນເມືອງນີ້, ຈະພັກຢູ່ທີ່ນັ້ນປີນຶ່ງ, ແລະຈະຄ້າຂາຍເອົາກຳໄລ." ອັນນີ້ເປັນພາບຂອງຄົນສ່ວນຫລາຍທີ່ເຂົາເຮັດແຜນການກັນ. ເມື່ອເຂົາຫາກຄິດເອົາເອງຢ່າງທະນົງຕົວວ່າເຂົາເປັນຜູ້ຄວບຄຸມຊີວິດເຂົາເອງ, ດ້ວຍເຫດໃດເຂົາຈົ່ງບໍ່ຊອກສແວງຫານ້ຳພຣະທັຍພຣະເຈົ້າກ່ອນ?

ຢາໂກໂບໄດ້ຕິຕຽນຄວາມຈອງຫອງຂອງພວກເຂົາຢ່າງເຄັ່ງຂືມເມື່ອເພິ່ນເຕືອນໃຫ້ຮູ້ເຖິງຄວາມຕັ້ງໃຈຂອງເຂົາເອງດ້ວຍຄວາມສາມາດອັນຈຳກັດຂອງເຂົາດ້ວຍການເວົ້າວ່າ, " ແຕ່ພວກເຈົ້າບໍ່ຮູ້ເຣື່ອງຂອງມື້ອື່ນ ວ່າຊີວິດຂອງພວກເຈົ້າຈະເປັນຢ່າງໃດ ! " ມັນເປັນຄວາມໂງ່ຈ້າແທ້ໃນການວາງແຜນການລ່ວງຫນ້າໂດຍທີ່ບໍ່ຮູ້ອັນໃດໃນເບື້ອງຫນ້າເລີຍ ແລະບໍ່ມີອັນໃດແນ່ນອນເລີຍ. ຄົນຂຽນພຣະຄັມພີສຸພາສິດໄດ້ຕັກເຕືອນວ່າ, "ຢ່າໂອ້ອວດເຣື່ອງມື້ອື່ນ ເພາະເຈົ້າບໍ່ຮູ້ດອກວ່າແມ່ນຫຍັງຈະເກີດຂຶ້ນໃນບັດນີ້ແລະຕໍ່ໄປ." ( ສພສ 27:1 ). ນັກທຸຣະກິດເຫລົ່ານີ້ໄດ້ວາງແຜນການລ່ວງຫນ້າຫລາຍປີເອົາໄວ້ໃນເມື່ອເຂົາຍັງບໍ່ຮູ້ວ່າມື້ອື່ນນີ້ຈະມີຫຍັງເກີດຂຶ້ນຊ້ຳ.

ຢາໂກໂບໄດ້ຊີ້ໃຫ້ເຫັນລະຍະຂ້າມຜ່ານຂອງທັມມະຊາດໃນຊີວິດໃຫ້ຊັດແຈ້ງອອກມາ, ເພິ່ນເວົ້າວ່າ, " ກໍເປັນເຫມືອນນ້ຳຫມອກທີ່ປາກົດຢູ່ຊົ່ວຄາວ ແລ້ວກໍຫາຍໄປ." ຄຳວ່າ ນ້ຳຫມອກ ສາມາດແປວ່າ ອາຍນ້ຳ ກໍໄດ້. ຈຸດປະສົງຂອງຄຳອຸປະມານີ້ແມ່ນເພື່ອປຽບທຽບກັບຄວາມເປັນນິດ, ຊີວິດຂອງມະນຸດນັ້ນກໍສຸດແສນສັ້ນອີ່ຫລີ. ການຄິດໂດຍເຊື່ອວ່າ ພວກເຮົາສາມາດວາງແຜນການຂ້າງຫນ້າຍາວນານໂດຍບໍ່ໄດ້ເຫັນຄວາມສຳຄັນຂອງພຣະເຈົ້າເລີຍນັ້ນຈະເປັນຢ່າງໃດ?

ຈະເປັນການສລາດກວ່າຫລື, ແລະອາດຫລາຍກວ່ານັ້ນອີກ ຖ້າຫາກອີງໃສ່ຄວາມເປັນຈິງ, ທີ່ຈະເວົ້າວ່າ, " ຖ້າພຣະເຈົ້າຊົງເຫັນຊອບ, ພວກເຮົາຈະມີຊີວິດຢູ່ແລະຈະເຮັດສິ່ງນີ້ຫລືສິ່ງນັ້ນ." ຢາໂກໂບສນັບສນູນເຣື່ອງການຍອມຖ່ອມຕົວຕໍ່ໜ້ານ້ຳພຣະທັຍຂອງພຣະເຈົ້າແທນທີ່ວ່າຈະເປັນການເດົາເອົາເອງຂອງມະນຸດ. ນ້ຳພຣະທັຍຂອງພຣະເຈົ້ານັ້ນຄວນຈະເປັນໃຈກາງຂອງແຜນການທຸກຢ່າງ. ຄວາມປາຖນາປະຈຳວັນທີ່ຈະເຮັດຕາມນ້ຳພຣະທັຍຂອງພຣະເຈົ້າຈະຕ້ອງເປັນເຄື່ອງໝາຍອັນແຈ້ງຂາວຂອງຄວາມເຊື່ອແທ້. ຄົນທີ່ມີຄວາມເຊື່ອແທ້ໃນພຣະເຈົ້ານັ້ນຈະຊະນະການທະນົງໃຈຫລືການຖືຕົວເອງ ແລະຈະອຸທິດຕົນໃຫ້ຍອມຖ່ອມຕົນຢູ່ພາຍໃຕ້ພຣະເຈົ້າ.

ແນ່ນອນທີ່ສຸດຢາໂກໂບບໍ່ໄດ້ເຮັດໃຫ້ພວກເຮົາເສັຽກຳລັງໃຈໃນການວາງແຜນການໃນອະນາຄົນແຕ່ຢ່າງໃດ. ພຽງແຕ່ວ່າແຜນການທັງໝົດເຫລົ່ານັ້ນຈະຕ້ອງຮັບຮູ້ຄວາມເປັນຜູ້ໃຫຍ່ສູງສຸດຂອງພຣະເຈົ້າໃນຊີວິດແລະໃນສະພາບການດ້ວຍ. ເຣື່ອງໃນຂໍ້ 15 ແມ່ນວ່າອະນາຄົນນັ້ນເປັນຂອງພຣະເຈົ້າ; ບໍ່ມີມະນຸດຄົນໃດໄດ້ຄວບຄຸມສິ່ງທີ່ຈະເກີດຂຶ້ນໃນຊົ່ວໂມງຂ້າງໜ້ານີ້, ມື້ໜ້າ, ແລະປີໜ້າ.

ແຕ່ວ່າດຽວນີ້ເຈົ້າທັງຫລາຍໂອ້ອວດດ້ວຍຄວາມຖືຕົວ. ການໂອ້ອວດຢ່າງນີ້ກໍລ້ວນເປັນແຕ່ຄວາມຊົ່ວ. ບໍ່ພຽງແຕ່ໄດ້ປະພຣະເຈົ້າໄວ້ນອກແຜນການຕ່າງໆທີ່ວາງອອກນັ້ນ, ແຕ່ວ່າພວກເຂົາຍັງໄດ້ໂອ້ອວດໃນຄວາມເປັນອິສຣະຈາກການເຫັນພ້ອມທີ່ມາຈາກພຣະອົງອີກດ້ວຍ. ການສລຸບຂອງຢາໂກໂບນັ້ນເປັນຫລັກການທົ່ວໄປທີ່ກ່ຽວກັບເຣື່ອງຄວາມບາບຂອງການຮູ້ຈັກນ້ຳພຣະທັຍຂອງພຣະເຈົ້າແລ້ວແຕ່ວ່າບໍ່ໄດ້ສົນໃຈກັບມັນເລີຍ. ເຫດສັນນີ້ຜູ້ໃດຮູ້ວ່າອັນໃດເປັນການດີແລະບໍ່ເຮັດ ຜູ້ນັ້ນຈຶ່ງມີບາບ. ການດີ ທີ່ຢາໂກໂບໄດ້ເວົ້າເຖິງເປັນພິເສດນີ້ ແມ່ນການສແວງຫານ້ຳພຣະທັຍຂອງພຣະເຈົ້າຢ່າງຈິງຈັງແທ້ ແທນທີ່ຈະໃຊ້ຊີວິດຢູ່ຕາມລຳພັງຕົນເອງໂດຍປາສຈາກພຣະອົງ.

ການປະພຶດວາງຕົວຂອງເຮົາໃນໂລກນີ້ ແລະແຜນການຊີວິດຂອງພວກເຮົານີ້ມັນແຕະຕ້ອງກັບຄວາມສຳພັນຂອງເຮົາກັບຄົນອື່ນແລະກັບພຣະເຈົ້າຢ່າງໃຫຍ່ຫລວງ. ໃນບົດຮຽນນີ້ພວກເຮົາໄດ້ເຫັນຄວາມສຳຄັນຂອງການໃຫ້ເປັນເອກຕໍ່ຄວາມສຳພັນແບບເປັນເພື່ອນກັບພຣະເຈົ້າ ແລະຍອມຖ່ອມຕົນລົງເພື່ອສແວງຫານ້ຳພຣະທັຍຂອງພຣະອົງ. ພວກເຮົາໄດ້ຮຽນຮູ້ວ່າ:

- ຄົນທັງຫລາຍໄດ້ເກີດການຜິດຖຽງກັນ ເພາະວ່າພວກເຂົາບໍ່ໄດ້ປະຖິ້ມການທະນົງຕົວຂອງພວກເຂົາ.
- ແທນທີ່ວ່າຈະໃຊ້ຊີວິດຢ່າງທະນົງຕົວ, ພວກເຮົາຄວນຈະໃຊ້ຊີວິດຢູ່ດ້ວຍການຍອມຖ່ອມຕົວລົງຢູ່ພາຍໃຕ້ພຣະເຈົ້າ.
- ພວກເຮົາບໍ່ຄວນຄາດຄະເນເຣື່ອງອານາຄົດເອົາເອງ ແຕ່ວ່າຄວນໃຫ້ສແວງຫານ້ຳພຣະທັຍພຣະເຈົ້າໃນແຕ່ລະວັນ.

( ອຸປະຖັມໂດຍລາວບັບຕິສສັມພັນ - WWW.LSBF.ORG )